ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento, CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໙ໄ/ປພຖຊ/໐໗໑໔໐໙**

# ຖະແລງການ

## ກ່ຽວກັບ ບົດໂອ້ລົມ ຂອງປະທານປະເທດ ກັບ ນັກສຶກສາລາວ.

ທ່ານປະທານປະເທດ ໄດ້ອອກມາໂອ້ລົມກັບນັກສຶກສາ, ຕາມເຄືອຂ່າຍ Internet You Tube. ເນື້ອໃນສຳຄັນ ໃນການພົບປະສ້າງສັນ, ທ່ານປະທານປະເທດ ໄດ້ເນັ້ນໜັກເຖິງມູນເຊື້ອ ນ້ຳໃຈຮັກຊາດ ເສັຽສລະ ເພື່ອກອບກູ້ເອົາແຜ່ນດິນລາວຕອນນີ້ກັບຄືນມາ. ທ່ານຍັງໄດ້ສເດງເຖິງຄວາມເປັນຫ່ວງເປັນໃຍ ນຳອະນາຄົດຂອງປະເທດຊາດ, ຍ້ອນຂາດຊັພຍາກອນມະນຸດ ທີ່ຈະໄປສ້າງສາພັທນາ ແລະຮຽກຮ້ອງໃຫ້ທຸກຄົນຕັ້ງໃຈຮຽນ, ແລ້ວກັບຄືນເມືອສ້າງສາພັທນາປະເທດຂອງຕົນ. ທ່ານໄດ້ຍ້ຳໃນຕອນນຶ່ງວ່າ "ພັກຣັດມີໝົດທຸກຢ່າງ, ຍັງຮຽກຮ້ອງຕ້ອງການແຕ່ຊັພຍາກອນມະນຸດເທົ່ານັ້ນ, ຄອງຄອຍຖ້າລູກຫລານໄປສ້າງສາປະເທດຊາດ.

ຕາມຄວາມເປັນຈິງແລ້ວ, ທ່ານປະທານປະເທດ ຮູ້ດີຢູ່ແລ້ວວ່າ ຄວນຈະອອກໄປໂອ້ລົມກັບຜູ້ໃດ ຈິ່ງຈະແກ້ໄຂບັນຫານີ້ໄດ້; ແທນທີ່ຈະອອກມາຈອບອອຍເອົາລູກຫລານ ເທື່ອລະເລັກເທື່ອລະນ້ອຍນີ້ ໃຫ້ເສັຽເວລາໄປ... ແຕ່ການທີ່ທ່ານປະທານປະເທດ ມີຄວາມເປັນຫ່ວງເປັນໃຍ ຕໍ່ອະນາຄົດຂອງຊາດ ແລະຕ້ອງການໃຫ້ລູກຫລານກັບຄືນເມືອສ້າງສາພັທນາປະເທດຊາດດັ່ງນີ້, ມັນກໍເປັນໄຊຊະນະອັນໃຫຍ່ຫລວງ ຂອງຊາດ ຂອງປະຊາຊົນ ຢ່າງໜ້າຍົກຍ້ອງສັລເສີນທີ່ສຸດ ເໝືອນກັນ!.

ເພາະມັນບົ່ງບອກເຖິງການຕື່ນຕົວ ຈາກຄວາມງົມງາຍໃນອຳນາດຜເດັດການພັກດຽວ. ງົມງາຍໃນຕຳນານ "ຊ້າງເຜືອກ-ຫີນພູ-ງູໃຫຍ່" ຂອງພັກຣັດ, ຊຶ່ງເປັນຕຳນານ ພັທນາປະເທດ ແບບ **"ເອົາໄຖ-ໄປກ່ອນຄວາຍ"**

**ບໍ່ສ້າງຄົນ, ແຕ່ສ້າງວັດຖຸ!.** ສິ່ງທີ່ສ້າງຂຶ້ນ ກໍເປັນພຽງທໍ່ດູດເລືອດ ອອກໄປຈາກປະເທດເຮົາເທົ່ານັ້ນເອງ, 99% ຂອງຄວາມຮັ່ງມີ ຈາກຊັພຍາກອນທັມຊາດໃນລາວ ຖືກບໍຣິສັທຕ່າງຊາດ ຂົນອອກໄປໄດ້ຢ່າງສດວກສບາຍ ຕາມຊົວທາງຫີນພູງູໃຫຍ່ຂອງພັກຣັດນັ້ນເອງ!. ທັງໆທີ່ 11 ແຂວງໃນພາກເໜືອຂອງລາວ ແລະແຂວງເຊກອງ ທາງພາກໃຕ້, ປະຊາຊົນອຶດເຂົ້າກິນ ບໍ່ເວັ້ນແຕ່ລະປີ. -ໜັງສືພິມຕ່າງປະເທດໄດ້ລົງຂ່າວວ່າ "ເມືອງລາວເປັນປະເທດທີ່ບໍ່ມີເຈົ້າຂອງ, ຜູ້ໃດມີເງິນເອົາໄປໃຫ້ສິນບົນ ແກ່ຄນະພັກຣັດ, ໃຫ້ແກ່ຜູ້ມີອຳນາດອິດທິພົນ, ໃຜຢາກເຮັດຫຍັງ ທຳຫຍັງ ກໍເຮັດໄດ້ທຳໄດ້ ຕາມໃຈ ເພາະພັກຣັດ ບໍ່ມີປັນຍາຈະຮັກສາໄວ້ໄດ້".

-ຄວາມເວົ້າດັ່ງນີ້, ໄດ້ເຮັດໃຫ້ລູກຫລານຄົນລາວຢູ່ຕ່າງປະເທດ ມີຄວາມເຈັບແສບ ແລະອັບອາຍຂາຍໜ້າເຫລືອທີ່ສຸດ!.

ການຮຽກຮ້ອງເອົານັກສຶກສາຄັ້ງນີ້, ກໍບໍ່ແຕກຕ່າງກັບຄັ້ງກ່ອນ ທີ່ຜ່ານມາ ໂດຍສະເພາະ ນັກສຶກສາຈາກປະເທດຜຣັ່ງເສດ ໄດ້ກັບຄືນປະເທດ ຫລາຍລຳບິນ ໃນເວລາທີ່ພັກຣັດ ຍຶດອຳນາດໃໝ່ໆ. ສ່ວນນັກຮຽນມັທຍົມແລະອຸດົມໃນລາວ, ພັກຣັດບອກວ່າ ຈະເອົາໄປຮຽນຕໍ່ຕ່າງປະເທດ ຍ້ອນຣະບອບເກົ່າບໍ່ມີຄວາມຍຸຕິທັມ, ລູກຫລານ ຂອງປະຊາຊົນ ບໍ່ໄດ້ໄປຮຽນຕໍ່ໃນຕ່າງປະເທດ. ໃນທີ່ສຸດ, ນັກສຶກສາຫລາຍໝື່ນຄົນ ໄດ້ຖືກເອົາໄປຊັງໄວ້ໃນໂຮງຮຽນວັທນະທັມກອງທັບ ເຂດທະຫານວຽງໄຊ. ຈາກນັ້ນ, ກໍສົ່ງໄປເປັນທະຫານພັນທະປົດປ່ອຍກຳພູເຈັຽ, ສ່ວນເຫລືອ ກໍເອົາໄປລ້ຽງງົວ ຢູ່ປ່າຫ່າງ ສາຍພູແດນແກວ.

ດັ່ງນັ້ນ, ປະທານປະເທດ ຕ້ອງບອກນັກສຶກສາເຫລົ່ານີ້ວ່າ "ຈະໃຫ້ພວກເຂົາໄປເຮັດຫຍັງອີກຖ້າກັບຄືນປະເທດ ໃນເມື່ອ ອຳນາດທຸກຢ່າງຢູ່ໃນກຳມື ຂອງພັກຣັດແຕ່ຝ່າຍດຽວ?. -ມີນັກສຶກສາລາວຫລາຍຄົນທີ່ພັກຣັດ ໄດ້ສົ່ງໄປຮຽນ ຢູ່ອະດີດສະຫະພາບໂຊວຽດ ເອີຣົບຕາວັນອອກ, ເຢັຽຣະມັນ ແລະແຫ່ງອື່ນໆ ຫລັງຈາກຮຽນຈົບແລ້ວ, ພວກເຂົາ ກໍບໍ່ກັບຄືນປະເທດ, ທັງໆທີ່ພວກເຂົາ ກໍລ້ວນແລ້ວແຕ່ເປັນລູກຫລານ, ເປັນເສັ້ນສາຍຂອງຄນະພັກຣັດ, ທັງນີ້, ກໍເພາະກັບຄືນປະເທດແລ້ວ, ບໍ່ໄດ້ຢູ່ດີມີສຸຂ, ກັບຄືນປະເທດແລ້ວ ບໍ່ໄດ້ຢູ່ລອດປອດພັຍນັ້ນເອງ.

ເຖິງຢ່າງໃດກໍຕາມ, ກ່ຽວກັບຄວາມຮຽກຮ້ອງຕ້ອງການ ສັພຍາກອນມະນຸດ ອັນໝາຍເຖິງຄົນລາວລຸ້ນໃໝ່ທີ່ມີຄວາມຮູ້ ຄວາມສາມາດ ໃນການສ້າງສາພັທນາປະເທດນັ້ນ, ພວກເຮົາ ປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວ ເຄີຍໄດ້ສເນີໃຫ້ພັກຣັດໄດ້ຮັບຮູ້ມາໂດຍຕລອດວ່າ "ພວກເຮົາມີຄວາມສາມາດ ທີ່ຈະນຳທຶນຮອນ, ອຸປກອນ, ພາຫະນະ ແລະ ບຸຄລາກອນ ທີ່ມີຄວາມຮູ້ຄວາມສາມາດໃນຣະດັບມາຕຖານສາກົນ ມາສ້າງສາພັທນາປະເທດ ໄດ້ຢ່າງພຽງພໍ ກັບຄວາມຕ້ອງການ, ຖ້າຫາກພັກຣັດສປປລາວ. ອອກມາໂອ້ລົມກັບພວກເຮົາປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.

ຖ້າພັກຣັດ, ມີນໍາໃຈຮັກຊາດ ແພງເຊື້ອຢ່າງແທ້ຈິງ, ພວກເຮົາ ບໍ່ເຫັນວ່າ ຈະມີອຸປສັກອັນໃດ ມາກີດກັ້ນ ບໍ່ໃຫ້ລາວສອງຝ່າຍ ໄດ້ຫັນໜ້າເຂົ້າມາແກ້ໄຂບັນຫາຊາດຮ່ວມກັນ ໃນເມື່ອພວກເຮົາ ກໍມີຈຸດຢືນອັນດຽວກັນ ຄື: **ຄວາມເປັນຊາດ ເອກຣາດນັ້ນເອງ** !. ເຖິງແມ່ນພວກເຮົາ ຈະປິ່ນຫລັງໃສ່ກັນ... ເດີນໄປຕາມເສັ້ນທາງ ຂອງໃຜລາວ, ແຕ່ໃນເມື່ອພວກເຮົາ ຫາກຍ່າງຢູ່ໃນເສັ້ນຂນານອັນດຽວກັນ, ມີຈິດໃຈ ຂອງຄວາມເປັນຊາດອັນດຽວກັນແລ້ວ, ແນ່ນອນວ່າ ພວກເຮົາ ກໍສາມາດຍ່າງເຂົ້າມາຢືນຢູ່ຕໍ່ໜ້າກັນໄດ້, ໂອ້ລົມກັນໄດ້ ເພາະໂລກນີ້ມັນກົມ. ທຸກຢ່າງ ເອື້ອອໍານວຍໃຫ້ໝົດແລ້ວ ເປັນຫຍັງ ພັກຣັດ ຈຶ່ງເມີນເສີຍຢູ່? ຈະລໍໃຫ້ສາກົນເປັນຜູ້ປ່ຽນໃຫ້, ກໍບໍ່ສົມຄວນ, ເພາະພວກເຮົາ ເປັນເຈົ້າຂອງປະເທດຊາດ.

**ປະຊາຊົນ ມີໄຊຍ໌, ເສຣີປະຊາທິປະໄຕ ອົງອາດ, ຊາດລາວ ຈົ່ງຈເຣີນ.**

**ຂໍຂອບໃຈ.**

**ສູນກາງຕາງໜ້າ**

**ພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ**

**ຫ້ອງການປະທານພັກ**

**ອາຈານ ສົມນຶກ ຟອງສູວັນ**

**ວັນທີ ໑໔ ສິງຫາ ໒໐໐໗.**